ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

<u>ກະຊວງອຸດສາຫະກຳ ແລະ ການຄ້າ.</u>

ເລກທີ່ 0555 /ອຄ

ນະຄອນຫລວງວຽງຈັນ, ວັນທີ່: 20 ມີນາ 2012

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ ຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

- ອີງຕາມກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 03/04/99
- ອີງຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ່ 02/99/ສພຊ, ລົງວັນທີ່ 03 ເມສາ 1999
- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງອຸດສາຫະກຳ ແລ່ະ ການຄ້າ ສະບັບເລກທີ່ 522/ນຍ, ລົງວັນທີ່ 23 ທັນວາ 2011.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ່ 1
## ວ່າດ້ວຍຫລັກການທົ່ວໄປ

ມາດຕາ 1: ຈຸດປະສົງ:

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດຫຼັກການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງສິ່ງເສດເຫຼືອທີ່ເປັນທາດແຂງຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 2: ຄວາມໝາຍຂອງຄຳສັບ:

1. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ: ໝາຍເຖິງໂຮງງານທຸກຂະໜາດທີ່ດຳເນີນການຜະລິດ, ປະກອບ, ສ້ອມແປງ, ປັບປຸງ, ດັດແປງ, ບັນຈຸ ຫຼື ການປຸງແຕ່ງຄືນໃໝ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ກົດໝາຍວ່າດ້ວຍຫັດຖະກຳ.

2. ສິ່ງເສດເຫຼືອ: ໝາຍເຖິງ ສິ່ງເສດເຫຼືອທີ່ເປັນທາດແຂງທຸກປະເພດທີ່ເກີດຈາກການກໍ່ສ້າງ, ຈາກການດຳເນີນ ແລະ ການສິ້ນສຸດກິດຈະການຂອງໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເຊັ່ນ : ເສດເຄມີ ແລະ ພາຊະນະບັນຈຸ, ເສດໂລຫະ, ເສດອະໂລຫະ, ເສດແກ້ວ, ເສດຢາງ, ເສດປລາສະຕິກ, ເສດເຈັ້ຍ, ຂີ້ເຖົ່າ, ສະແລັກ, ເສດສັດ, ເສດພືດ, ຕະກອນ, ເສດໄມ້ ແລະ ເສດອື່ນໆ.

3. ຜູ້ຜະລິດສິ່ງເສດເຫຼືອ: ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ກໍ່ໃຫ້ເກີດມີສິ່ງເສດເຫຼືອ.

4. ສິ່ງເສດເຫຼືອເປັນອັນຕະລາຍ: ໝາຍເຖິງ ສິ່ງເສດເຫຼືອທີ່ມີອົງປະກອບປົນເປື້ອນວັດຖຸອັນຕະລາຍຊະນິດຕ່າງໆໄດ້ແກ່: ວັດຖຸລະເບີດ, ວັດຖຸໄວໄຟ, ວັດຖຸອອກໄຊ ແລະ ເປີອອກໄຊ, ວັດຖຸເປັນພິດ, ວັດຖຸທີ່ເຮັດໃຫ້ເກີດໂລກພະຍາດ, ວັດຖຸກຳມັນທະພາບລັງສີ, ວັດຖຸທຳລາຍ (ກັດເຊາະ), ວັດຖຸທີ່ເຮັດໃຫ້ເກີດການປ່ຽນແປງທາງພັນທຸກຳ, ວັດຖຸທີ່ທຳໃຫ້ເກີດການລະຄາຍເຄືອງ, ວັດຖຸເຄມີພັນ ຫຼື ວັດຖຸອື່ນໆ ທີ່ເຮັດໃຫ້ເກີດອັນຕະລາຍແກ່ບຸກຄົນ, ສັດ, ພືດ, ຊັບສິນ, ສິ່ງແວດລ້ອມ ເຊັ່ນ: ເຄື່ອງໃຊ້ເອເລັກໂຕຣນິກ, ໝໍ້ໄຟ, ຖ່ານໄຟສາຍ, ດອກໄຟຂາດ, ຫຼອດໄຟນີອອນ, ເສດໂລຫະທີ່ມີລັງສີ, ເສດນ້ຳມັນ, ສານເຄມີ, ກະປ໋ອງສະເປທີ່ບັນຈຸສີ ຫຼື ສານເຄມີຕ່າງໆ ແລະ ອື່ນໆ.

5. ການຄຸ້ມຄອງສິ່ງເສດເຫຼືອ: ໝາຍເຖິງການວາງແຜນ ແລະ ການຈັດຕັ້ງປະຕິບັດໃນການເກັບມ້ຽນ, ການກຳຈັດ ແລະ ບຳບັດສິ່ງເສດເຫຼືອໃຫ້ຖືກວິທີ.

6. ການເກັບຮັກສາສິ່ງເສດເຫຼືອ: ໝາຍເຖິງການລວບລວມ ຫຼື ການທ້ອນໂຮມສິ່ງເສດເຫຼືອປະເພດຕ່າງໆ ຢູ່ພາຍໃນໂຮງງານໄວ້ໃນສະຖານທີ່ໃດນຶ່ງທີ່ເໝາະສົມ ກ່ອນຈະນຳໄປບຳບັດ ຫຼື ກຳຈັດ.

7. ການແຍກສິ່ງເສດເຫຼືອ: ໝາຍເຖິງ ການໄຈ້ແຍກບັນດາສິ່ງເສດເຫຼືອໄວ້ເປັນກຸ່ມກ່ອນຈະນຳໄປກຳຈັດ, ເພື່ອເປັນການຫຼຸດຜ່ອນປະລິມານສິ່ງເສດເຫຼືອ ແລະ ຮັກສາໄດ້ສະພາບແວດລ້ອມ ທີ່ດີໃຫ້ແກ່ສິ່ງແວດລ້ອມ ແລະ ສັງຄົມ ເຊັ່ນ : ສິ່ງເສດເຫຼືອທີ່ສາມາດນຳໃຊ້ຄືນໃໝ່ໄດ້, ສິ່ງເສດເຫຼືອ ທີ່ສາມາດນຳກັບມາຜະລິດຄືນໃໝ່ໄດ້, ສິ່ງເສດເຫຼືອຕ້ອງຖິ້ມ, ສິ່ງເສດເຫຼືອອັນຕະລາຍ, ສິ່ງເສດເຫຼືອມີພິດ ແລະ ອື່ນໆ.

8. ການຫລຸດຜ່ອນປະລິມານສິ່ງເສດເຫຼືອ: ໝາຍເຖິງ ການຫຼີກລ້ຽງການສ້າງສິ່ງເສດເຫຼືອ ໂດຍບໍ່ຈຳເປັນ, ການນຳໃຊ້ຄືນວັດສະດຸ ແລະ ສິ່ງເສດເຫຼືອຕ່າງໆ ເພື່ອຫຼຸດຜ່ອນປະລິມານສິ່ງເສດເຫຼືອ ທີ່ຜະລິດອອກໃນແຕ່ລະວັນ ເຊັ່ນ : ການຄັດເລືອກເຕັກໂນໂລຊີທີ່ມານຳໃຊ້, ການນຳໃຊ້ວັດຖຸດິບຢ່າງມີປະສິດທິຜົນ.

ມາດຕາ 3 : ຂອບເຂດການນຳໃຊ້:

ຂໍ້ຕົກລົງສະບັບນີ້ໃຊ້ເພື່ອຄຸ້ມຄອງສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

## ໝວດທີ 2

## ປະເພດສິ່ງເສດເຫຼືອ ແລະ ພາຊະນະບັນຈຸສິ່ງເສດເຫຼືອ

ມາດຕາ 4: ປະເພດສິ່ງເສດເຫຼືອ

ສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແບ່ງອອກ 2 ປະເພດຄື:

1. ສິ່ງເສດເຫຼືອທີ່ເປັນອັນຕະລາຍ: ປະກອບມີ

   1.1. ສິ່ງເສດເຫຼືອສານເຄມີ ແລະ ພາຊະນະບັນຈຸທີ່ມີຄຸນລັກສະນະ:

   - ກໍ່ໃຫ້ເກີດການລະເບີດ
   - ກໍ່ໃຫ້ເກີດໄຟໄວ
   - ທາດເປັນພິດ
   - ກໍ່ໃຫ້ເກີດມະເຮັງ (Carcinogen)
   - ກັດເປື່ອຍໂລຫະ (Corrosive to Metals)
   - ກັດເປື່ອຍຜິວໜັງ

   1.2. ສິ່ງເສດເຫຼືອສານກຳມັນຕະພາບລັງສີ

   1.3. ຕະກອນຈາກລະບົບບຳບັດທີ່ເຈືອປົນສານເຄມີ

   1.4. ສິ່ງເສດເຫຼືອອັນຕະລາຍອື່ນໆ

2. ສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ: ສິ່ງເສດເຫຼືອທົ່ວໄປ ທີ່ເກີດຈາກການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ຊຶ່ງສິ່ງເສດເຫຼືອເລົ່ານັ້ນບໍ່ໄດ້ຈັດເຂົ້າໃນສິ່ງເສດເຫຼືອທີ່ເປັນອັນຕະລາຍຕາມທີ່ໄດ້ລະບຸໄວ້ໃນຂໍ້ 1 ຂອງມາດຕາ 4.

ມາດຕາ 5: ກຸ່ມຂອງສິ່ງເສດເຫຼືອ:

ສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳປຸງແຕ່ງ ແລະຫັດຖະກຳ ແບ່ງອອກເປັນ 3 ກຸ່ມ ຄື:

1. ຍ່ອຍສະຫຼາຍໄດ້ໄວ ເຊັ່ນ: ເສດອາຫານ, ຜັກ, ຊີ້ນ ແລະ ອື່ນໆ.
2. ຍ່ອຍສະຫຼາຍໄດ້ຊ້າ ເຊັ່ນ: ເຈ້ຍເສດ, ເສດຜ້າ, ເສດໄມ້, ເສດແກ້ວ, ເກີບໜັງ, ເສດກະເບື້ອງ, ຖົງຢາງ, ປາສະຕິກ ແລະ ເສດໂລຫະຕ່າງໆ.
3. ບໍ່ສາມາດຍ່ອຍສະຫຼາຍ ເຊັ່ນ: ປະເພດໂຟມ...

ມາດຕາ 6: ພາຊະນະບັນຈຸ ສິ່ງເສດເຫຼືອ:

ຢູ່ໃນໂຮງງານ ຕ້ອງມີພາຊະນະບັນຈຸສິ່ງເສດເຫຼືອຕາມຄວາມເໝາະສົມ ແລະມີການແຍກປະເພດຢ່າງຈະແຈ້ງ, ພາຊະນະບັນຈຸສິ່ງເສດເຫຼືອຕ້ອງມີຄວາມແໜ້ນໜາ, ບໍ່ແຕກ, ບໍ່ຮົ່ວຊຶມ, ຕ້ອງຕິດສະຫຼາກ , ເຄື່ອງໝາຍ ແລະຕ້ອງກຳນົດສີພາຊະນະບັນຈຸຕາມປະເພດສິ່ງເສດເຫຼືອ ເຊັ່ນ: ສີຂີ້ເທົ່າໃຊ້ກັບສິ່ງເສດເຫຼືອທີ່ເປັນອັນຕະລາຍ, ສີດຳໃຊ້ກັບສິ່ງເສດເຫຼືອທີ່ເປັນພິດ, ສີຂຽວໃຊ້ກັບສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ, ສີເຫຼືອງໃຊ້ກັບສິ່ງເສດເຫຼືອທີ່ສາມາດນຳໄປຜະລິດ ແລະ ນຳໃຊ້ຄືນໄດ້. ຊຶ່ງແຕ່ລະສີສາມາດແຍກອອກເປັນຫຼາຍຖັງໄດ້ຕາມ

ແຕ່ລະປະເພດຂອງສິ່ງເສດເຫຼືອ ຕົວຢ່າງ: ຖົງສີເຫຼືອງ ອາດກຳນົດໃຫ້ມີຖົງບັນຈຸ ເສດແກ້ວ, ເສດເຈ້ຍ, ເສດປລາສະຕິກ ແລະ ອື່ນໆ.

## ໝວດທີ 3
## ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ

ມາດຕາ 7: ສະຖານທີ່ທ້ອນໂຮມສິ່ງເສດເຫຼືອຂອງໂຮງງານ:

ຢູ່ໃນໂຮງງານຕ້ອງມີສະຖານທີ່ທ້ອນໂຮມ/ເກັບຮັກສາສິ່ງເສດເຫຼືອຢ່າງເໝາະສົມ ຄື: ຕ້ອງມີເນື້ອທີ່ກວ້າງຂວາງ, ມີອ່າງ/ພາສະນະຮອງຮັບທີ່ມີຄວາມແໜ້ນໜາ, ສະດວກໃນການຂົນສົ່ງ, ຕ້ອງມີຮົ້ວກັ້ນ, ມີປ້າຍເຕືອນ, ມີລະບົບປ້ອງກັນໄພຄົບຊຸດ ແລະ ຕ້ອງມີການຈັດແບ່ງເຂດເກັບມ້ຽນຕາມປະເພດສິ່ງເສດ ເຫຼືອ. ມຸງດ້ວຍສັງກະສີ ຫຼື ວັດຖຸອື່ນໆ ທີ່ເໝາະສົມ ເພື່ອຫຼີກເວັ້ນຝົນຮົ່ວ ແລະ ອື່ນໆ.

ສຳລັບໂຮງງານທີ່ມີເນື້ອທີ່ຈຳກັດ ຫຼື ຕ້ອງການຢາກເກັບຮັກສາສິ່ງເສດເຫຼືອຢູ່ນອກສະຖານທີ່ໂຮງງານ ກໍ່ສາມາດປະຕິບັດໄດ້ແຕ່ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 8: ການທ້ອນໂຮມ ແລະ ເກັບຮັກສາສິ່ງເສດເຫຼືອ:

1. ຜູ້ຜະລິດສິ່ງເສດເຫຼືອຕ້ອງໄດ້ແຍກ ແລະຈັດເກັບສິ່ງເສດເຫຼືອ ໃສ່ພາຊະນະບັນຈຸສິ່ງເສດເຫຼືອແຕ່ລະປະເພດແລ້ວເກັບຮັກສາໃນສະຖານທີ່ທ້ອນໂຮມສິ່ງເສດເຫຼືອຂອງຕົນທີ່ໄດ້ກຳນົດໄວ້ກ່ອນຈະນຳໄປກຳຈັດ ຫຼື ບຳບັດ.
2. ເວລາໃນການເກັບຮັກສາແມ່ນຂຶ້ນກັບແຕ່ລະປະເພດຂອງສິ່ງເສດເຫຼືອ ແຕ່ສູງສຸດບໍ່ໃຫ້ເກີນ 60 ວັນ. ໃນກໍລະນີສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ຫຼື ບໍ່ສາມາດເກັບໄວ້ໄດ້ດົນ, ຕ້ອງໄດ້ນຳໄປກຳຈັດ ຫຼື ບຳບັດທັນທີ, ແຕ່ຖ້າຈະເກັບຮັກສາເກີນໄລຍະເວລາທີ່ກຳນົດໄວ້ ຕ້ອງໄດ້ລາຍງານຢ່າງເປັນລາຍລັກອັກສອນໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ເພື່ອພິຈາລະນາ.
3. ຕ້ອງໃຫ້ມີຜູ້ຮັບຜິດຊອບຄຸ້ມຄອງສິ່ງເສດເຫຼືອຢູ່ໃນໂຮງງານ.
4. ຕ້ອງຮັບປະກັນຄວາມປອດໄພ ເຊັ່ນ: ບໍ່ໃຫ້ມີການຮົ່ວໄຫລ, ເກີດອັກຄີໄພ, ການລະເບີດ ແລະ ອື່ນໆ.

ມາດຕາ 9: ການເຄື່ອນຍ້າຍ ຫຼື ຂົນສົ່ງ ສິ່ງເສດເຫຼືອ:

1. ກ່ອນການນຳສິ່ງເສດເຫຼືອປະເພດອັນຕະລາຍອອກນອກບໍລິເວນໂຮງງານທຸກໆຄັ້ງ ຕ້ອງແຈ້ງຂໍ້ມູນລະອຽດຕໍ່ກົມອຸດສາຫະກຳ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ຊາບ ແລະ ຖ້າຈຳເປັນອາດຈະໄດ້ລົງໄປຕິດຕາມກວດກາ ເພື່ອເບິ່ງຄວາມພ້ອມໃນການຂົນສົ່ງ ເຊັ່ນ: ການບັນຈຸ, ຫຸ້ມຫໍ່, ຕິດສະຫຼາກ ແລະ ອື່ນໆ ເພື່ອປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດ, ບໍ່ໃຫ້ຕົກເຮ່ຍໃນເວລາຂົນສົ່ງ ແລະ ບໍ່ໃຫ້ຖິ້ມສິ່ງເສດເຫຼືອແບບຊະຊາຍ.
2. ຜູ້ຂົນສົ່ງສິ່ງເສດເຫຼືອປະເພດອັນຕະລາຍ ຕ້ອງແມ່ນຜູ້ທີ່ມີຄວາມຮູ້ຄວາມສາມາດດ້ານວິຊາ

ສະເພາະທີ່ກ່ຽວຂ້ອງ ແລະ ມີປະສົບການເຮັດວຽກງານດ້ານນີ້ມາກ່ອນຢ່າງໜ້ອຍ 2 ປີຂຶ້ນໄປ.

3. ການຂົນສົ່ງສິ່ງເສດເຫຼືອປະເພດອັນຕະລາຍຕ້ອງປະຕິບັດຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 10: ການບໍາບັດ ຫຼື ກໍາຈັດສິ່ງເສດເຫຼືອ:

1. ສິ່ງເສດເຫຼືອປະເພດທີ່ບໍ່ເປັນອັນຕະລາຍ:
   ສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍຈາກສະຖານທີ່ປະກອບກິດຈະການຕ້ອງໄດ້ນໍາໄປບໍາບັດ ຫຼື ກໍາຈັດ ຄ້າຍຄືສິ່ງເສດເຫຼືອທົ່ວໄປຈາກອາຄານບ້ານເຮືອນ ແລະ ສະຖານທີ່ອື່ນໆ ຕາມທາງການທີ່ອະນຸຍາດ.
2. ສິ່ງເສດເຫຼືອປະເພດທີ່ເປັນອັນຕະລາຍ:
   ຕ້ອງໄດ້ແຍກອອກຈາກສິ່ງເສດ ເຫຼືອປະເພດອື່ນ ແລ້ວນໍາໄປກໍາຈັດດ້ວຍວິທີທີ່ເໝາະສົມ ເຊັ່ນ: ນໍາໄປເຜົາໃນເຕົາເຜົາສະເພາະ ຫຼື ເອົາໄປຝັງກົບທີ່ຖືກສຸຂະລັກສະນະຕາມບ່ອນທີ່ທາງການກໍານົດໄວ້. ຖ້າໃນກໍລະນີທີ່ບໍ່ສາມາດກໍາຈັດໄດ້ຢູ່ພາຍໃນປະເທດຈະຕ້ອງຈັດສົ່ງກັບຄືນໃຫ້ບໍລິສັດເດີມ ຫຼື ປະເທດທີ່ສາມາດກໍາຈັດໄດ້.

ມາດຕາ 11: ການຫຼຸດຜ່ອນປະລິມານສິ່ງເສດເຫຼືອ:

ຜູ້ຜະລິດສິ່ງເສດເຫຼືອ ຕ້ອງໄດ້ເອົາໃຈໃສ່ໃນການຄົ້ນຄ້ວາ, ວາງແຜນການ ແລະ ກໍານົດມາດຕະການຕ່າງໆ ເພື່ອຫຼຸດຜ່ອນການຜະລິດສິ່ງເສດເຫຼືອຂອງຕົນເອງໃຫ້ໜ້ອຍເທົ່າທີ່ຈະໜ້ອຍໄດ້ ເຊັ່ນ: ການນໍາໃຊ້ວັດຖຸດິບ ແລະ ເຕັກໂນໂລຊີທີ່ພາໃຫ້ເກີດມີສິ່ງເສດເຫຼືອໜ້ອຍ, ການນໍາໃຊ້ສິ່ງເສດເຫຼືອຄືນໃໝ່, ການຜະລິດຄືນໃໝ່ ແລະ ອື່ນໆ.

## ໝວດທີ່ 4
## ຂໍ້ຫ້າມ

ມາດຕາ 12: ຂໍ້ຫ້າມ :

1. ຫ້າມນໍາເອົາສິ່ງເສດເຫຼືອ ປະເພດທີ່ເປັນອັນຕະລາຍປົນກັນ ຫຼື ປົນກັບສິ່ງເສດເຫຼືອທີ່ບໍ່ອັນຕະລາຍ.
2. ຫ້າມຂົນສົ່ງສິ່ງເສດເຫຼືອອັນຕະລາຍທຸກປະເພດທີ່ບໍ່ໄດ້ບັນຈຸ, ຫຸ້ມຫໍ່ ແລະ ຕິດສະຫຼາກໃຫ້ຮຽບຮ້ອຍ.
3. ຫ້າມຖິ້ມ ແລະ ຖອກເທສິ່ງເສດເຫຼືອທຸກປະເພດໃສ່ສະຖານທີ່ຕ່າງໆ ເຊັ່ນ: ໃນສະຖານທີ່ສ່ວນຕົວ ຫຼື ສະຖານທີ່ສາທາລະນະ, ຮ່ອງລະບາຍນໍ້າສາທາລະນະ, ຫ້ວຍນໍ້າລໍາເຊ ແລະ ອື່ນໆ.
4. ຫ້າມຈູດ, ເຜົາສິ່ງເສດເຫຼືອທຸກປະເພດ ດ້ວຍລະບົບເປີດ ຫຼື ບໍ່ຖືກຕ້ອງຕາມເຕັກນິກ.
5. ຫ້າມນໍາພາສະນະບັນຈຸສິ່ງເສດເຫຼືອທີ່ເປັນອັນຕະລາຍ ໄປນໍາໃຊ້ຄືນ, ເອົາໃຫ້ ຫຼື ຂາຍທົ່ວໄປ.

6. ຫ້າມບັນຈຸສິ່ງເສດເຫຼືອລົ້ນຖັງ, ຖົງ ແລະ ພາຫານະຂົນສົ່ງຢ່າງເດັດຂາດ.

## ໝວດທີ່ 5

## ສິດ ແລະ ພັນທະຂອງຜູ້ຜະລິດສິ່ງເສດເຫຼືອ

ມາດຕາ13: ສິດຂອງຜູ້ຜະລິດສິ່ງເສດເຫຼືອ:

ຜູ້ຜະລິດສິ່ງເສດເຫຼືອມີສິດສະເໜີຄຳຄິດຄຳເຫັນ, ຮ້ອງຂໍຄວາມເປັນທຳ ແລະການຊ່ວຍເຫຼືອຕ່າງໆ ເຊັ່ນ : ເຕັກນິກໃນການເກັບຮັກສາ, ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອຂອງຕົນຕໍ່ລັດຖະບານ.

ມາດຕາ14: ພັນທະ ຂອງຜູ້ຜະລິດສິ່ງເສດເຫຼືອ:

1. ຕ້ອງຮັບປະກັນບໍ່ໃຫ້ສິ່ງເສດເຫຼືອຂອງຕົນ ສ້າງຜົນກະທົບຕໍ່ສະພາບແວດລ້ອມ ແລະ ສັງຄົມ. ຕ້ອງຮັບປະກັນໃຫ້ສະຖານທີ່ໂຮງງານມີຄວາມສະອາດງາມຕາ ແລະ ຮັບປະກັນດ້ານສຸຂະນາໄມ ຢູ່ສະເໝີ.
2. ຕ້ອງຮັບຜິດຊອບຕໍ່ທຸກຜົນກະທົບທີ່ສ້າງຄວາມເສັຍຫາຍ ໃຫ້ແກ່ສິ່ງແວດລ້ອມ ແລະ ສັງຄົມດ້ວຍຮູບການຕ່າງໆເຊັ່ນ: ການຟື້ນຟູສິ່ງແວດລ້ອມ, ທົດແທນຄືນມູນຄ່າຂອງຄວາມເສັຍຫາຍ, ຈ່າຍຄ່າປິ່ນປົວ ຫຼື ອື່ນໆ ຕາມລະບຽບກົດໝາຍວາງໄວ້.
3. ຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍຕ່າງໆ ໃນການຂົນສົ່ງ, ເກັບຮັກສາ, ການກຳຈັດ ແລະ ບຳບັດສິ່ງເສດເຫຼືອ ແລະ ອື່ນໆ ທີ່ເປັນອັນຕະລາຍ.
4. ຕ້ອງເປັນຜູ້ຮັບຊອບຕໍ່ຜົນເສຍຫາຍດັ່ງກ່າວຕາມກໍລະນີຂອງຄວາມເສຍຫາຍດັ່ງທີ່ໄດ້ກຳນົດໃນມາດຕາ 55 ຂອງກົດໝາຍວ່າອຸດສາຫະກຳປຸງແຕ່ງ ແລະ ຕາມລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ່ 6

## ການຄຸ້ມຄອງ ແລະ ກວດກາ

ມາດຕາ15: ອົງການຄຸ້ມຄອງ ແລະ ກວດກາ.

ອົງການຄຸ້ມຄອງ ແລະຕິດຕາມກວດກາ ປະກອບດ້ວຍ:

- ກົມອຸດສາຫະກຳ ແລະ ຫັດຖະກຳ.
- ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະ ນະຄອນຫຼວງ.
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ

ມາດຕາ16: ການຕິດຕາມ ແລະ ກວດກາ.

ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ອຳນາດການປົກຄອງບ້ານ ຕ້ອງຖືເອົາວຽກງານການຄຸ້ມຄອງສິ່ງເສດເຫຼືອ ຢູ່ສະຖານທີ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳເປັນສ່ວນໜຶ່ງຂອງວຽກງານການເຄື່ອນໄຫວຕິດຕາມກວດກາ ແລະ ປະເມີນຜົນຂອງວຽກ

ງານການປ້ອງກັນ ແລະ ຄຸ້ມຄອງສິ່ງເສດເຫຼືອ ເປັນແຕ່ລະໄລຍະ ແລະ ປົກກະຕິ.

ມາດຕາ17: ສິດຂອງກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງມີຄື:

ກ. ມີສິດສັ່ງໂຈະການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳທີ່ກວດກາເຫັນວ່າການເກັບມ້ຽນ, ການກຳຈັດ ແລະ ບຳບັດ ຫຼື ການປ່ອຍສິ່ງເສດເຫຼືອທີ່ມີຜົນກະທົບສູງຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງງານທີ່ຖືກສັ່ງໂຈະຕ້ອງຢຸດຕິການດຳເນີນກິດຈະການຂອງຕົນໂດຍທັນທີ.

ຂ. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຖືກສັ່ງໂຈະຕ້ອງໄດ້ປັບປຸງລະບົບການປ້ອງກັນ ຫຼື ວິທີການເກັບຮັກສາຄືນໃຫ້ສຳເລັດແລ້ວ, ຈຶ່ງສາມາດນຳສະເໜີຫາກົມອຸດສາຫະກຳ ແລະ ຫັດຖະກຳ ຫຼື ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ ເພື່ອພິຈາລະນາຄືນໃໝ່.

## ໝວດທີ 7

## ນະໂຍບາຍຕໍ່ຜູ້ມີຜົນງານແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 18: ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.

1. ບຸກຄົນ ຫຼື ຜູ້ປະກອບກິດຈະການທີ່ໄດ້ເປັນແບບຢ່າງໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານຄຸ້ມຄອງສິ່ງເສດເຫຼືອຈະໄດ້ຮັບການຍ້ອງຍໍ ຫຼື ການປະຕິບັດນະໂຍບາຍຕ່າງໆ ຈາກຂັ້ນຕ່າງໆ ເຊັ່ນ: ຈາກຂັ້ນທ້ອງຖິ່ນ, ຂັ້ນກະຊວງ ຫຼື ຂັ້ນລັດຖະບານ
2. ການຍ້ອງຍໍ ຫຼື ການປະຕິບັດນະໂຍບາຍຕ່າງໆ ແມ່ນອີງໃສ່ຜົນຈາກການຕິດຕາມຊຸກຍູ້ກວດກາ ແລະ ປະເມີນຜົນຂອງຄະນະກຳມະການຄຸ້ມຄອງສິ່ງແວດລ້ອມໂຮງງານຢູ່ສະຖານທີ່ປະກອບກິດຈະການຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ

ມາດຕາ 19: ມາດຕະການຕໍ່ຜູ້ລະເມີດ:

ຜູ້ຜະລິດສິ່ງເສດເຫຼືອ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໄໝ ແລະ ໃສ່ໂທດ ຕາມກໍລະນີໜັກ ຫຼື ເບົາ ດັ່ງລຸ່ມນີ້:

1. ເຮັດບົດບັນທຶກຕັກເຕືອນ, ພ້ອມທັງໃຫ້ການປຶກສາຫາລື ຫຼື ແນະນຳວິທີການປັບປຸງລະບົບການເກັບຮັກສາ ແລະ ບຳບັດ ຫຼື ວິທີການກຳຈັດ ສິ່ງເສດເຫຼືອທີ່ເກີດຂື້ນຈາກການດຳເນີນກິດຈະການຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.
2. ຢຸດຕິການດຳເນີນກິດຈະການໂຮງງານຊົ່ວຄາວ ເພື່ອດຳເນີນການປັບປຸງລະບົບການເກັບຮັກສາ, ເຕັກນິກ ຫຼື ວິທີການກຳຈັດສິ່ງເສດເຫຼືອທີ່ເກີດຂື້ນຈາກການດຳເນີນກິດຈະການຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ..
3. ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ, ປັບໄໝ ແລະ ໃສ່ໂທດຕາມລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

ມາດຕາ 20: ມາດຕະການທາງອາຍາ:

ໃນກໍລະນີຜູ້ຜະລິດສິ່ງເສດເຫຼືອ ຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ: ປອມແປງບົດລາຍງານຜົນການກວດກາປະລິມານສິ່ງເສດເຫຼືອທີ່ເກີດຈາກໂຮງງານ, ນຳເອົາສິ່ງເສດເຫຼືອອັນຕະລາຍໄປເຈືອປົນກັບສິ່ງເສດເຫຼືອທົ່ວໄປ ແລະ ອື່ນໆ ຈະຖືກປະຕິບັດມາດຕະການທາງອາຍາ ແລະ ມາດຕະການລົງໂທດເພີ່ມຕາມມາດຕາ 57 ແລະ 58 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

## ໝວດທີ່ 8
## ບົດບັນຍັດສຸດທ້າຍ

ມາດຕາ 21: ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ພະແນກອຸດສາຫະ ກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງເປັນຜູ້ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ ຖືກຕ້ອງ ແລະເຂັ້ມງວດ.

ມາດຕາ 22: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ